ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈໍາ

ເລກທີ 03 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 17 / 01 / 23

# ບົດລາຍງານ

## ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈໍາປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2023

- ອີງຕາມ ກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2020 ມາດຕາ 59 ກ່ຽວກັບກອງປະຊຸມສະໄໝສາມັນ ປະຈໍາປີ ຂອງສະພາແຫ່ງຊາດ;
- ອີງຕາມ ແຜນດໍາເນີນງານຂອງຄະນະປະຈໍາສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 12/ຄປຈ, ລົງວັນທີ 11 ພະຈິກ 2021;
- ອີງຕາມ ແຜນການເຄື່ອນໄຫວວຽກງານ ຂອງສະພາແຫ່ງຊາດ ປະຈໍາປີ 2022 ສະບັບເລກທີ 08/ຄປຈ, ລົງວັນທີ 25 ພະຈິກ 2021.

ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈໍາປີ 2022 ໄດ້ດໍາເນີນໃນທ່າມກາງສະພາບການຂອງພາກພື້ນ ແລະ ສາກົນ ທີ່ຜັນແປຢ່າງສະລັບຊັບຊ້ອນ ເຮັດໃຫ້ສະພາບການທາງດ້ານເສດຖະກິດ-ການເງິນ ພາຍໃນປະເທດຂອງພວກເຮົາ ຍິ່ງເພີ່ມຄວາມຫຍຸ້ງຍາກຂຶ້ນ ແຕ່ດ້ວຍຄວາມເອົາໃຈໃສ່ນໍາພາ-ຊີ້ນໍາຂອງກົມການເມືອງສູນກາງພັກ, ຄວາມເປັນເອກະພາບສູງຂອງຄະນະປະຈໍາສະພາແຫ່ງຊາດ, ຄວາມເປັນເຈົ້າການຂອງສະມາຊິກສະພາແຫ່ງຊາດ, ບັນດາກົງຈັກເສນາທິການ ເຮັດໃຫ້ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ມີຜົນສໍາເລັດຫຼາຍດ້ານ ຊຶ່ງສາມາດສະຫຼຸບສັງລວມການເຄື່ອນໄຫວວຽກງານ ປະຈໍາປີ 2022 ແລະ ວາງທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2023 ດັ່ງນີ້:

### I. <u>ຕີລາຄາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈໍາປີ 2022</u>

### ກ. <u>ດ້ານດີ ແລະ ຜົນສໍາເລັດ</u>

### 1. <u>ດ້ານນິຕິບັນຍັດ</u>

1.1 ສໍາເລັດການຮຽບຮຽງ ແລະ ປັບປຸງບັນດາກົດໝາຍ ຈໍານວນ 9 ສະບັບ ທີ່ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ໄດ້ປະກາດໃຊ້ຢ່າງເປັນທາງການ (**ເອກະສານຊ້ອນທ້າຍທີ 1**);

1.2 ຕິດຕາມຊຸກຍູ້ພາກສ່ວນກ່ຽວຂ້ອງ ກະກຽມບັນດາຮ່າງກົດໝາຍ ຈໍານວນ 12 ສະບັບ, ຈັດຕັ້ງການທາບທາມຢ່າງກວ້າງຂວາງ ໃນ 6 ຈຸດ ທົ່ວປະເທດ; ຈັດກອງປະຊຸມກວດກາຄວາມພ້ອມຂອງບັນດາຮ່າງກົດໝາຍ, ລະດົມຄວາມຄິດເຫັນ ແລະ ສ້າງຄວາມເປັນເອກະພາບ ໃນກອງປະຊຸມປຶກສາຫາລືຄຸນນະພາບດ້ານເນື້ອໃນໃຫ້ແກ່ສະມາຊິກສະພາແຫ່ງຊາດ ເພື່ອເຮັດໃຫ້ບັນດາກົດໝາຍ ມີເນື້ອໃນຄົບຖ້ວນ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ ກ່ອນຈະນໍາເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX (**ເອກະສານຊ້ອນທ້າຍທີ 2**);

1.3 ດໍາເນີນກອງປະຊຸມສໍາມະນາວິທະຍາສາດແນວຄວາມຄິດ ໄກສອນ ພົມວິຫານ ກ່ຽວກັບການສ້າງ, ປະຕິບັດລັດຖະທໍາມະນູນ ແຫ່ງ ສປປ ລາວ ແລະ ກອງປະຊຸມສໍາມະນາວິທະຍາສາດ ຄົ້ນຄວ້າການຍົກເລີກບາງມາດຕາຂອງກົດໝາຍ; ຄົ້ນຄວ້າປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025; ຈັດຕັ້ງກອງປະຊຸມປະເມີນການປະຕິບັດກົດໝາຍ

ອົງຂອດເສດຖະກິດ-ການເງິນ ແລະ ອົງຂອດຍຸຕິທຳ ຈຳນວນ 8 ສະບັບ ຊຶ່ງມີບັນດາຂະແໜງການອ້ອມຂ້າງກະຊວງ, ອົງການ ແລະ ທ້ອງຖິ່ນຕ່າງໆ ຈຳນວນ 19 ພາກສ່ວນເຂົ້າຮ່ວມ **(ເອກະສານຊ້ອນທ້າຍທີ 3)**;

1.4 ຄົ້ນຄວ້າ ແລະ ໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໄດ້ຈຳນວນ 2 ສະບັບ ຄື: ສົນທິສັນຍາແຮງງານສາກົນວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ, ສົນທິສັນຍາວ່າດ້ວຍຂອບແຜນງານສົ່ງເສີມຄວາມປອດໄພ ແລະ ສຸຂະພາບແຮງງານ. ນອກນັ້ນ, ໄດ້ຄົ້ນຄວ້າສົນທິສັນຍາວ່າດ້ວຍການປົກປ້ອງວັດຖຸມໍລະດົກທາງການະພາບ (ສະບັບປັບປຸງ);

1.5 ຄົ້ນຄວ້າຕີຄວາມໝາຍ ແລະ ອະທິບາຍກົດໝາຍ ໄດ້ຈຳນວນ 3 ສະບັບ ທີ່ພົວພັນກັບກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍຄອບຄົວ; ຈັດຕັ້ງການລົງໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ສຳນັກງານຂອງສະພາແຫ່ງຊາດ, ບັນດາກະຊວງ, ອົງການ ແລະ ຂະແໜງການຕ່າງໆ ລວມທັງເຂດເລືອກຕັ້ງຈຳນວນໜຶ່ງ.

## 2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

ສະພາແຫ່ງຊາດ ໄດ້ປະຕິບັດພາລະບົດບາດຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໂດຍຜ່ານກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ດັ່ງນີ້:

2.1 ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາເນື້ອໃນຕ່າງໆ ຈຳນວນ 23 ເນື້ອໃນ ແລະ ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 20 ສະບັບ. ໃນນີ້, ວຽກງານລັດຖະບານ 9 ສະບັບ, ວຽກງານສະພາແຫ່ງຊາດ 2 ສະບັບ, ການສ້າງ ແລະ ປັບປຸງກົດໝາຍ 9 ສະບັບ. ນອກນັ້ນ, ຍັງໄດ້ຄົ້ນຄວ້າ ແລະ ກະກຽມເນື້ອໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຊຶ່ງມີເນື້ອໃນຕ່າງໆ ຈຳນວນ 27 ເນື້ອໃນ ແລະ ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 22 ສະບັບ. ໃນນີ້, ວຽກງານລັດຖະບານ 2 ສະບັບ, ວຽກງານສະພາແຫ່ງຊາດ 4 ສະບັບ, ວຽກງານອົງການກວດສອບແຫ່ງລັດ ແລະ ວຽກງານອົງການກວດກາແຫ່ງລັດ 2 ສະບັບ, ວຽກງານອົງການໄອຍະການປະຊາຊົນສູງສຸດ ແລະ ວຽກງານສານປະຊາຊົນສູງສຸດ 2 ສະບັບ, ການສ້າງ ແລະ ປັບປຸງກົດໝາຍ 12 ສະບັບ **(ເອກະສານຊ້ອນທ້າຍທີ 4)**;

2.2 ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ປະຕິບັດພາລະບົດບາດ ແທນສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດ ບໍ່ໄດ້ເປີດກອງປະຊຸມ ດ້ວຍການດຳເນີນກອງປະຊຸມຂອງຕົນ ໄດ້ຈຳນວນ 15 ຄັ້ງ ເພື່ອພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຊຶ່ງພິຈາລະນາເນື້ອໃນຕ່າງໆ ຈຳນວນ 198 ເນື້ອໃນ ແລະ ອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ ຈຳນວນ 74 ສະບັບ. ໃນນີ້, ວຽກງານລັດຖະບານ 17 ສະບັບ, ວຽກງານສະພາແຫ່ງຊາດ 11 ສະບັບ, ວຽກງານສານປະຊາຊົນສູງສຸດ 45 ສະບັບ, ວຽກງານອົງການກວດສອບແຫ່ງລັດ 1 ສະບັບ **(ເອກະສານຊ້ອນທ້າຍທີ 5)**.

## 3. ດ້ານການຕິດຕາມກວດກາ

3.1 ສະພາແຫ່ງຊາດ ໄດ້ເອົາໃຈໃສ່ຕິດຕາມກວດກາ ຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 3, ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ດ້ວຍການຮັບຟັງບົດລາຍງານຂອງລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ຕາມກົດໝາຍກຳນົດ; ຄົ້ນຄວ້າບັນຫາພົ້ນເດັ່ນຂອງສັງຄົມ ເພື່ອໃຫ້ບັນດາກະຊວງ, ອົງການ ຈຳນວນ 37 ພາກສ່ວນ ຊີ້ແຈງ ຊຶ່ງກອງປະຊຸມສະພາແຫ່ງຊາດ ໄດ້ຮັບຟັງການຊີ້ແຈງທັງໝົດ 58 ເທື່ອຄັ້ງ, ກວມເອົາ 147 ຄຳຖາມ **(ເອກະສານຊ້ອນທ້າຍທີ 6)**. ໃນນີ້, ສະມາຊິກສະພາແຫ່ງຊາດ ໄດ້ປະກອບຄຳເຫັນ, ຊັກຖາມທັງໝົດ 502 ເທື່ອທ່ານ, ກວມ 84,51% ຂອງຜູ້ລົງທະບຽນ. ພ້ອມດຽວກັນນີ້, ສະມາຊິກສະພາແຫ່ງຊາດ ກໍໄດ້ໃຫ້ຄະແນນປະເມີນຕໍ່ຄວາມຮັບຜິດຊອບຂອງບຸກຄະລາກອນທີ່ມາລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ຊຶ່ງມີເປົ້າໝາຍຖືກປະເມີນທັງໝົດ 30 ທ່ານ, ຍິງ 6 ທ່ານ ໃນນີ້, ສະພາແຫ່ງຊາດ 7 ທ່ານ, ຍິງ 2 ທ່ານ; ລັດຖະບານ 22 ທ່ານ, ຍິງ 4 ທ່ານ ແລະ ອົງການໄອຍະການປະຊາຊົນສູງສຸດ 1 ທ່ານ. ຜົນການປະເມີນມີຜູ້ທີ່ໄດ້ຄະແນນສູງສຸດ 7-8 ຈັດຢູ່ປະເພດດີ ກວມເອົາ 98,63 % ແລະ ຄະແນນຕ່ຳສຸດ 5-6 ຈັດຢູ່ໃນປະເພດກາງ ກວມເອົາ 1,37%;

3.2 ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຕິດຕາມກວດກາ ດ້ວຍການດຳເນີນກອງປະຊຸມຮ່ວມກັບຄະນະລັດຖະບານ 2 ຄັ້ງ ເພື່ອປຶກສາເປັນເອກະພາບໃນການແກ້ໄຂບັນຫາເດັ່ງຮ້ອນຂອງສັງຄົມ ທີ່ຕິດພັນກັບເນື້ອໃນຕ່າງໆ ຈຳນວນ 21 ຫົວຂໍ້ **(ເອກະສານຊ້ອນທ້າຍທີ 7)**. ພ້ອມກັນນັ້ນ, ກໍ່ໄດ້ດຳເນີນກອງປະຊຸມຮ່ວມ ກັບອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ປະຈຳປີ 2022 ພາກສ່ວນລະ 1 ຄັ້ງ;

3.3 ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ນຳພາການເຄື່ອນໄຫວຕິດຕາມກວດກາຫົວຂໍ້ຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນ ໄດ້ຈຳນວນ 35 ເທື່ອຄັ້ງ ໂດຍສຸມໃສ່ການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຜັນຂະຫຍາຍເນື້ອໃນກົດໝາຍ ເປັນນິຕິກຳໃຕ້ກົດໝາຍ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຕິດພັນກັບວາລະແຫ່ງຊາດ, ການປະຕິບັດໂຄງການລົງທຶນທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ ລວມທັງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ; ຊຸກຍູ້ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຕິດຕາມກວດກາວຽກງານຕ່າງໆ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ທີ່ກົດໝາຍກຳນົດ **(ເອກະສານຊ້ອນທ້າຍທີ 8)**. ນອກນັ້ນ, ໄດ້ໃສ່ຊີ້ນຳຄະນະເລຂາທິການສະພາແຫ່ງຊາດ ລົງເຄື່ອນໄຫວຕິດຕາມຊຸກຍູ້ວຽກງານຂອງຕົນ ຢູ່ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ 14 ແຂວງ;

3.4 ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ປະຕິບັດພາລະບົດບາດຕິດຕາມກວດກາ ໂດຍຜ່ານການຮັບຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ລວມທັງໝົດ 921 ເລື່ອງ, ສາມາດຄົ້ນຄວ້າພິຈາລະນາ ໄດ້ຈຳນວນ 320 ເລື່ອງ; ຕ້ອນຮັບ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ 287 ຄັ້ງ; ຄົ້ນຄວ້າສັງລວມວຽກງານສາຍດ່ວນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຈຳນວນ 487 ຫົວຂໍ້ ແລະ ນຳສົ່ງໃຫ້ກະຊວງ, ອົງການ, ຂະແໜງການ, ພາກສ່ວນກ່ຽວຂ້ອງ ຈຳນວນ 26 ພາກສ່ວນ ເພື່ອຄົ້ນຄວ້າແກ້ໄຂ.

3.5 ການຕິດຕາມກວດກາ ການຈັດຕັ້ງປະຕິບັດວາລະແຫ່ງຊາດ

ນັບແຕ່ກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດໃນເດືອນ ສິງຫາ ປີ 2021 ໄດ້ຮັບຮອງເອົາສອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ, ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ຊີ້ນຳ-ນຳພາຊຸກຍູ້, ເຄື່ອນໄຫວຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດດັ່ງກ່າວ ຕາມມະຕິ ເລກທີ 03/ສພຊ ແລະ 04/ສພຊ, ລົງວັນທີ 10 ສິງຫາ 2021 ແລະ ປະຕິບັດຕາມມະຕິກອງປະຊຸມສະພາແຫ່ງຊາດ ເລກທີ 62/ສພຊ, ລົງວັນທີ 8 ກໍລະກົດ 2022 ເຊິ່ງບັນດາທ່ານໃນຄະນະປະທານ, ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ ໄດ້ເປັນເຈົ້າການຕິດຕາມກວດກາຕາມຂອບເຂດຄວາມຮັບຜິດຊອບຂອງຕົນໄດ້ດີພໍສົມຄວນ.

ໃນບົດປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ທີ່ສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ນີ້ ກໍ່ໄດ້ມີການຕີລາຄາຢ່າງກົງໄປກົງມາ, ຈະແຈ້ງ, ຊັດເຈນ ກ່ຽວກັບຜົນສຳເລັດ, ບັນຫາທີ່ຈະຕ້ອງໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດດັ່ງກ່າວແລ້ວ. ແຕ່ຜ່ານການລົງຕິດຕາມກວດກາ, ສະພາແຫ່ງຊາດເຫັນວ່າ:

**1) <u>ຕໍ່ກັບການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ມີ 4 ບັນຫາ:</u>**

- ລັດຖະບານ ໄດ້ມີການຜັນຂະຫຍາຍມະຕິຂອງສະພາແຫ່ງຊາດເປັນນິຕິກຳ, ແຜນການ ແລະ ໂຄງການລະອຽດ, ແຕ່ຂອດການປະຕິບັດຍັງຊັກຊ້າ, ບາງຂະແໜງການບໍ່ທັນເປັນເອກະພາບກັນ, ບໍ່ທັນມີການປະເມີນຄວາມຄືບໜ້າຫຼາຍ;
- ການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກຜະລິດຕະພັນສິນຄ້າ ບໍ່ທັນບັນລຸຕາມແຜນການ, ການກຳນົດເຂດການຜະລິດສິນຄ້າໃນທ້ອງຖິ່ນຢູ່ລຽບຕາມເສັ້ນທາງລົດໄຟ ລາວ-ຈີນ, ເສັ້ນທາງດ່ວນ ບໍ່ທັນລະອຽດຊັດເຈນ, ການປຸກແຕ່ງບໍ່ທັນຫຼາຍ; ການເຂົ້າຫາແຫຼ່ງທຶນຍັງມີຄວາມຫຍຸ້ງຍາກ;

- ການສ້າງ ແລະ ບູລະນະເສັ້ນທາງທ້ອງຖິ່ນ ແລະ ເສັ້ນທາງຫຼວງແຫ່ງຊາດ ເພື່ອເຊື່ອມໂຍງກັບທາງດ່ວນ, ທາງລົດໄຟ ບໍ່ທັນມີຄວາມຄືບໜ້າເທົ່າທີ່ຄວນ;

- ການຂຸດຄົ້ນແຮ່ຫຼັກແບບທົດລອງ ບໍ່ທັນມີປະສິດທິພາບເທົ່າທີ່ຄວນ, ບໍ່ສາມາດເລືອກໄດ້ບໍລິສັດ ທີ່ເປັນມືອາຊີບ, ການຂຸດຄົ້ນ ແລະ ສົ່ງອອກບໍ່ໄດ້ຕາມແຜນການ, ບໍ່ສາມາດເກັບລາຍຮັບໄດ້ຕາມແຜນການ.

**2) <u>ດ້ານການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ເຫັນວ່າ:</u>**

ການຜັນຂະຫຍາຍຍັງຊັກຊ້າ, ບໍ່ທັນກາຍເປັນຂະບວນການທີ່ກວ້າງຂວາງ, ການປະຕິບັດຕາມພາລະບົດບາດຄວາມຮັບຜິດຊອບຍັງມີໜ້ອຍ ໂດຍສະເພາະ ໃນຂະແໜງການສຶກສາ, ສາທາລະນະສຸກ, ແຮງງານ ແລະ ອົງການຈັດຕັ້ງມະຫາຊົນ; ມີຄວາມຫຍຸ້ງຍາກດ້ານງົບປະມານ, ການປະເມີນກວດກາໜ້າວຽກທີ່ເຮັດໄປບໍ່ທັນໄດ້ດີ, ບັນຫາທີ່ຍັງບໍ່ທັນໄດ້ຮັບການແກ້ໄຂຍັງມີຫຼາຍ ເປັນຕົ້ນ:

- ສະຖານທີ່ຄຸມຂັງຊົ່ວຄາວຢູ່ຂັ້ນເມືອງ, ແຂວງຍັງຄັບແຄບ, ແອອັດ, ກັກຂັງປົນເປກັນ ລະຫວ່າງຜູ້ຕ້ອງຫາຄະດີຢາເສບຕິດ ກັບຜູ້ຕ້ອງຫາຄະດີອື່ນໆ;

- ສູນບຳບັດຍັງບໍ່ທັນພຽງພໍ ເພື່ອຮັບເອົາຜູ້ເສບຢາເສບຕິດມາບຳບັດ;

- ຊີວິດການເປັນຢູ່ຂອງຜູ້ຖືກກ່າວຫາ, ນັກໂທດ ຍັງພົບຄວາມຫຍຸ້ງຍາກຫຼາຍ;

- ການເກັບກຳຂໍ້ມູນ, ເຫຼັ່ງຂ່າວກ່ຽວກັບການເຄື່ອນໄຫວຂອງເປົ້າໝາຍຢາເສບຕິດ ຍັງບໍ່ທັນລະອຽດ;

- ການດຳເນີນຄະດີ ຍັງຊັກຊ້າ, ຫຼາຍຄະດີຍັງຄ້າງຢູ່ໃນໄລຍະສືບສວນ-ສອບສວນຂອງເຈົ້າໜ້າທີ່ຢູ່;

- ວຽກງານຄຸ້ມຄອງ, ຕິດຕາມກວດກາ ການເຄື່ອນໄຫວຂອງເປົ້າໝາຍຕິດພັນກັບຢາເສບຕິດບໍ່ທັນແໜ້ນ, ເປັນລະບົບ, ຈະແຈ້ງ ແລະ ຮັດກຸມແທ້.

**4. <u>ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ</u>**

4.1 ຄະນະປະຈຳສະພາແຫ່ງຊາດ ໄດ້ນຳພາການດຳເນີນກອງປະຊຸມປຶກສາຫາລືແນວທາງດ້ານເນື້ອໃນກອງປະຊຸມສະໄໝສາມັນ ເທື່ອທີ 3 ແລະ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ແກ່ສະມາຊິກສະພາແຫ່ງຊາດ ເພື່ອຄົ້ນຄວ້າເນື້ອໃນບົດລາຍງານ ແລະ ບັນດາຮ່າງກົດໝາຍ ຈຳນວນ 26 ເນື້ອໃນ ໃຫ້ມີຄວາມເປັນເອກະພາບ ກ່ອນຈະນຳເອົາເນື້ອໃນມາພິຈາລະນາຮັບຮອງຢູ່ກອງປະຊຸມສະພາແຫ່ງຊາດ **(ເອກະສານຊ້ອນທ້າຍທີ 9)**;

4.2 ຄະນະປະຈຳສະພາແຫ່ງຊາດ ໄດ້ຊີ້ນຳກຳມາທິການກ່ຽວຂ້ອງ ເພື່ອລົງສົມທົບກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈຳນວນ 15 ແຂວງ ເພື່ອເກັບກຳຂໍ້ມູນລະບົບການຈັດຕັ້ງ ແລະ ກົງຈັກຊ່ວຍວຽກຂອງສະພາທ້ອງຖິ່ນ, ຈັດຕັ້ງກອງປະຊຸມແລກປ່ຽນບົດຮຽນການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ 2 ຄັ້ງ; ຈັດກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອປຶກສາຫາລືເຖິງລະບອບແບບແຜນວິທີເຮັດວຽກ, ກົນໄກປະສານງານ ແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານ; ສ້າງປຶ້ມຄູ່ມືຕ່າງໆ ເປັນຕົ້ນ ການພົບປະ ກັບປະຊາຊົນ, ການພິຈາລະນາ ແລະ ແກ້ໄຂວຽກງານສາຍດ່ວນ, ການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ ແລະ ວຽກງານອື່ນໆ; ຈັດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງ ເພື່ອປຶກສາວຽກງານປັບປຸງກົງຈັກເສນາທິການ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຄົ້ນຄວ້າ, ຍົກຍ້າຍ ແລະ ແຕ່ງຕັ້ງຮອງປະທານກຳມາທິການ ແລະ ສະມາຊິກສະພາແຫ່ງຊາດ ປະຈຳການຈຳນວນໜຶ່ງ; ຊຸກຍູ້ສົ່ງເສີມໃຫ້ການບັນຈຸສະມາຊິກສະພາແຫ່ງຊາດ ເຂົ້າສັງກັດກຳມາທິການຕ່າງໆ; ຄົ້ນຄວ້າ, ບັນຈຸຊັບຊ້ອນບຸກຄະລາກອນເຂົ້າໃນກົງຈັກພາຍໃນສະພາແຫ່ງຊາດ ເປັນລະບົບດີຂຶ້ນ ດ້ວຍການຂຽນຕຳແໜ່ງງານ ແລະ ສ້າງແຜນການກຳນົດພະນັກງານບຳພາ-ຄຸ້ມຄອງຂອງສະພາແຫ່ງຊາດ ສອດຄ່ອງກັບປີກຳວາງອອກ ຊຶ່ງມາຮອດປັດຈຸບັນ ກົງຈັກເສນາທິການສະພາແຫ່ງຊາດ ໄດ້ຮັບການອະນຸມັດດ້ານຕຳແໜ່ງງານສຳເລັດໂດຍພື້ນຖານເທົ່າກັບ 82% ຂອງກົງຈັກທັງໝົດ ແລະ ພວມສືບຕໍ່ປະຕິບັດໃຫ້ສຳເລັດໃນປີ 2023.

4.3 ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ຊີ້ນຳ-ນຳພາວຽກງານການສ້າງຄວາມເຂັ້ມແຂງ ດ້ວຍການຈັດກອງປະຊຸມຝຶກອົບຮົມສຳມະນາຫົວຂໍ້ຕ່າງໆ ໄດ້ຈຳນວນ 54 ຄັ້ງ. ໃນນີ້, ໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຈຳນວນ 8 ຄັ້ງ ມີຫົວຂໍ້ຈຳນວນໜຶ່ງ ເຊັ່ນ: 1) ການປະຕິບັດພາລະບົດບາດຂອງສະພາ ແລະ

ສະມາຊິກສະພາ; 2) ທັກສະການສ້າງນິຕິກຳ ແລະ ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ; 3) ທັກສະການຊັກຖາມ, ການປະກອບຄຳເຫັນຢູ່ກອງປະຊຸມສະພາ, ການລົງພົບປະຜູ້ມີສິດເລືອກຕັ້ງ ແລະ ການຕິດຕາມກວດກາ; 4) ການເຄື່ອນໄຫວວຽກງານ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ; 5) ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ; 6) ການຕິດຕາມກວດກາງົບປະມານ ກ່ຽວກັບການພັດທະນາວຽກງານແມ່ຍິງ ແລະ ເດັກນ້ອຍ; 7) ການປະຕິບັດນະໂຍບາຍ ແລະ ການລົງທຶນ ເຂົ້າໃນລະບົບປົກປ້ອງສັງຄົມ; 8) ການປົກປ້ອງສົ່ງເສີມວຽກງານດ້ານສິດທິມະນຸດ ແລະ ວຽກງານການຕ່າງປະເທດ ຊຶ່ງມີຜູ້ເຂົ້າຮ່ວມ 338 ທ່ານ, ຍິງ 106 ທ່ານ; ຈັດຝຶກອົບຮົມໃນຫົວຂໍ້ຕ່າງໆ ໃຫ້ແກ່ພະນັກງານ-ລັດຖະກອນ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ຈຳນວນ 46 ຄັ້ງ. ນອກນັ້ນ, ຍັງໄດ້ຊີ້ນຳບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ດຳເນີນກອງປະຊຸມຄົບຄະນະ ແລະ ກອງປະຊຸມປະຈຳປີ ສຳເລັດໂດຍພື້ນຖານ ເພື່ອສະຫຼຸບຕີລາຄາການເຄື່ອນໄຫວວຽກງານຂອງຕົນ ແລະ ເປັນຂໍ້ມູນສະໜອງໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ສະພາແຫ່ງຊາດ ຊຸດທີ IX **(ເອກະສານຊ້ອນທ້າຍທີ 10);**

4.4 ເອົາໃຈໃສ່ຊີ້ນຳ-ນຳພາການສ້າງ ແລະ ປັບປຸງບັນດານິຕິກຳໃຕ້ກົດໝາຍ ໃນຂົງເຂດວຽກງານຂອງສະພາແຫ່ງຊາດ ໄດ້ທັງໝົດຈຳນວນ 53 ສະບັບ ໃນນີ້, ນິຕິກຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະປະຈຳສະພາແຫ່ງຊາດ ແລະ ບັນດາກົງຈັກການຈັດຕັ້ງສະພາແຫ່ງຊາດ ຈຳນວນ 30 ສະບັບ; ນິຕິກຳການປະສານງານ ກັບພາກສ່ວນຕ່າງໆ ແລະ ນິຕິກຳການຮັບໃຊ້ວຽກງານລວມຂອງສະພາແຫ່ງຊາດ ຈຳນວນ 23 ສະບັບ **(ເອກະສານຊ້ອນທ້າຍທີ 11).**

**5. <u>ດ້ານການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ</u>**

5.1 ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ດຳເນີນກອງປະຊຸມ ປະຈຳປີຂອງຕົນ ເພື່ອຕີລາຄາການເຄື່ອນໄຫວວຽກງານ ປີ 2021 ແລະ ກຳນົດແຜນການ ປີ 2022; ປະສານສົມທົບກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ແລະ ເທື່ອທີ 3 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ຊຶ່ງໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນຂອງທ້ອງຖິ່ນ ຕາມທີ່ກົດໝາຍໄດ້ກຳນົດ; ເປັນເຈົ້າການປະກອບຄຳເຫັນໃນນາມຕາງໜ້າຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ແລະ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

5.2 ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ເອົາໃຈໃສ່ຕິດຕາມ, ຄຸ້ມຄອງສະມາຊິກສະພາແຫ່ງຊາດ ໃນການເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ ເຂົ້າຮ່ວມກອງປະຊຸມສະໄໝສາມັນ ເທື່ອທີ 3 ແລະ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຊຶ່ງຜ່ານມາ ສະມາຊິກສະພາແຫ່ງຊາດ ມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ, ມີກຳລັງລະບຽບການຈັດຕັ້ງ, ຕັ້ງໜ້າປະຕິບັດໜ້າທີ່ເປັນຕົວແທນແກ່ປະຊາຊົນບັນດາເຜົ່າ ສະແດງອອກການປະກອບຄຳເຫັນ, ຊັກຖາມດ້ວຍຄວາມຮັບຜິດຊອບ, ການໃຫ້ຄະແນນຕໍ່ບຸກຄະລາກອນທີ່ມາລາຍງານ, ຊີ້ແຈງຕໍ່ກອງປະຊຸມ ແລະ ລົງຄະແນນສຽງຮັບຮອງເອົາເນື້ອໃນຕ່າງໆຂອງກອງປະຊຸມ; ເກັບກຳສະຖິຕິ (ການເລື່ອນຊັ້ນ, ຂັ້ນ, ຕຳແໜ່ງ), ຂຽນຜົນງານການເຄື່ອນໄຫວ ແລະ ຂຽນຊີວະປະຫວັດ ຂອງສະມາຊິກສະພາແຫ່ງຊາດ. ພ້ອມດຽວກັນນີ້, ຍັງໄດ້ປະສານສົມທົບກັບສະມາຊິກສະພາປະຊາຊົນຂັ້ນແຂວງ ໃນການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 2 ແລະ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ທັງໝົດ 2.029 ຈຸດ, ມີຜູ້ເຂົ້າຮ່ວມ 212.951 ເທື່ອຄົນ, ຍິງ 88.505 ເທື່ອຄົນ; ລະດົມທຶນຊ່ວຍເຫຼືອປະຊາຊົນຈາກພາຍໃນ ແລະ ຕ່າງປະເທດ ເປັນເງິນ-ວັດຖຸ ລວມມູນຄ່າທັງໝົດ 2.067.913.756 ກີບ **(ເອກະສານຊ້ອນທ້າຍທີ 12);**

5.3 ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃນຖານະທີ່ເປັນກົງຈັກຂອງຄະນະປະຈຳສະພາແຫ່ງຊາດ ທີ່ປະຕິບັດວຽກງານຂອງສະພາແຫ່ງຊາດ ຢູ່ເຂດເລືອກຕັ້ງ ກໍໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານດ້ວຍຄວາມຮັບຜິດຊອບສູງ ເຊັ່ນ: ການນຳເອົາຮ່າງກົດໝາຍ ລົງໄປທາບທາມປະຊາຊົນ, ສະຫຼຸບ-ສັງລວມ, ລາຍງານຄະນະປະຈຳສະພາແຫ່ງຊາດ; ສົມທົບກັບສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າພິຈາລະນາ, ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ ໄດ້ທັງໝົດ 38 ສະບັບ, ໃນນີ້ ສ້າງໃໝ່ 28 ສະບັບ ແລະ ປັບປຸງ 10 ສະບັບ **(ເອກະສານຊ້ອນທ້າຍທີ 13)**; ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ສະແດງອອກການເຂົ້າຮ່ວມພິຈາລະນາຮັບຮອງເອົາບັນຫາສຳຄັນຂອງທ້ອງຖິ່ນ ຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ແລະ ກອງປະຊຸມປະຈຳເດືອນ ຂອງຄະນະປະຈຳສະພາ

ປະຊາຊົນຂັ້ນແຂວງ. ນອກຈາກການຕິດຕາມກວດກາໃນກອງປະຊຸມສະພາປະຊາຊົນຂັ້ນແຂວງແລ້ວ ຍັງໄດ້ຕິດຕາມຮ່ວມກັບຄະນະສະເພາະກິດຕ່າງໆ ຂອງສະພາແຫ່ງຊາດ; ການເກັບກຳຄຳຄິດເຫັນຂອງປະຊາຊົນລາວບັນດາເຜົ່າ ເພື່ອສະເໜີໃຫ້ບັນດາພະແນກການ ແລະ ອົງການກ່ຽວຂ້ອງຂອງຂັ້ນທ້ອງຖິ່ນ ຂຶ້ນລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ;

5.4 ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ຮ່ວມກັບຄະນະເລຂາທິການສະພາແຫ່ງຊາດ ແລະ ກຳມາທິການກ່ຽວຂ້ອງ ປະສານສົມທົບ ກັບສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າປັບປຸງກົງຈັກເສນາທິການຂັ້ນປະແໜງການຊ່ວຍວຽກ ໃຫ້ສອດຄ່ອງກັບສະພາບຈຸດພິເສດຂອງຕົນ ແລະ ຮັບປະກັນການປະຕິບັດໜ້າທີ່ວຽກງານ. ມາຮອດປັດຈຸບັນ ໄດ້ສຳເລັດພື້ນຖານໃນການສ້າງຕັ້ງປະແໜງການຊ່ວຍວຽກ ຊຶ່ງ 10 ແຂວງ ມີ 10 ປະແໜງ; 4 ແຂວງ ມີ 9 ປະແໜງ; 3 ແຂວງ ມີ 7 ປະແໜງ ແລະ 1 ແຂວງ ມີ 6 ປະແໜງ; ສຳລັບການສ້າງຕັ້ງໜ່ວຍງານຊ່ວຍວຽກ ປະຈຳເຂດເລືອກຕັ້ງຢູ່ເມືອງ ມີ 3 ແຂວງ ແລະ ຍັງ 15 ແຂວງ ພວມສືບຕໍ່ຄົ້ນຄວ້າການສ້າງຕັ້ງໜ່ວຍງານຊ່ວຍວຽກດັ່ງກ່າວ.

**6. <u>ດ້ານການເຄື່ອນໄຫວວຽກງານຕ່າງປະເທດ</u>**

ຄະນະປະຈຳສະພາແຫ່ງຊາດ ໄດ້ເຄື່ອນໄຫວວຽກງານການຕ່າງປະເທດຂອງຕົນ ສອດຄ່ອງຕາມແນວທາງການຕ່າງປະເທດຂອງພັກ ດ້ວຍຄວາມເປັນເຈົ້າການ ແລະ ມີຜົນສຳເລັດເປັນຢ່າງດີ ເປັນຕົ້ນ ການລົງນາມບົດບັນທຶກການຮ່ວມມື (MOU) 7 ສະບັບ ລະຫວ່າງສະພາແຫ່ງຊາດລາວ ກັບ ສະພາແຫ່ງຊາດຫວຽດນາມ, ກຳປູເຈຍ ແລະ ຣາຊະອານາຈັກໄທ; ຄົ້ນຄວ້າບົດບັນທຶກການຮ່ວມມື (MOU) 5 ສະບັບ ລະຫວ່າງສະພາປະຊາຊົນແຂວງຜົ້ງສາລີ, ແຂວງຫຼວງນ້ຳທາ, ແຂວງອຸດົມໄຊ, ແຂວງຫຼວງພະບາງ ຮ່ວມກັບສະພາປະຊາຊົນແຂວງຢູນນານ, ສປ. ຈີນ; ລະຫວ່າງສະພາປະຊາຊົນແຂວງໄຊສົມບູນ ຮ່ວມກັບສະພາປະຊາຊົນແຂວງ ເຊີນລາ, ສສ. ຫວຽດນາມ; ເອົາໃຈໃສ່ພົວພັນຮ່ວມມືໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ໄດ້ຮັບການເສີມຂະຫຍາຍ ໂດຍສະເພາະ ກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ສາກົນ ໄດ້ຈຳນວນ 122 ເທື່ອຄັ້ງ. ໃນນີ້, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ແລກປ່ຽນບົດຮຽນ ຈຳນວນ 11 ຄະນະ; ເຂົ້າຮ່ວມກອງປະຊຸມລະດັບຕ່າງໆ ຈຳນວນ 26 ເທື່ອຄັ້ງ; ຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດ ຈຳນວນ 32 ຄະນະ; ຕ້ອນຮັບການເຂົ້າຢ້ຽມຂຳນັບ ແລະ ເຂົ້າອວຍພອນຂອງບັນດາຄະນະຜູ້ແທນພາຍໃນ ແລະ ຕ່າງປະເທດ ລວມທັງທູດານຸທູດ, ອົງການຈັດຕັ້ງສາກົນ ປະຈຳຢູ່ ສປປ ລາວ ຈຳນວນ 53 ຄະນະ (**ເອກະສານຊ້ອນທ້າຍທີ 14**).

**7. <u>ການເຄື່ອນໄຫວວຽກງານປົ່ນອ້ອມ</u>**

ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ຊີ້ນຳການສ້າງເງື່ອນໄຂສະດວກດ້ານພື້ນຖານໂຄງລ່າງ ໃຫ້ບັນດາສະພາປະຊາຊົນແຂວງ ດ້ວຍການລົງຕິດຕາມກວດກາບັນດາໂຄງການກໍ່ສ້າງຫ້ອງການສະພາແຂວງ ຢູ່ຫຼາຍແຂວງ, ຜ່ານການລົງຕິດຕາມກວດກາເຫັນວ່າ ບັນດາໂຄງການນັ້ນ ມີຫຼາຍປະເພດ: ໂຄງການສຳເລັດແລ້ວແຕ່ບໍ່ທັນໄດ້ຊຳລະ (ໂຄງການຕິດໜີ້), ໂຄງການທີ່ມີການດັດແກ້ ແລະ ເພີ່ມມູນຄ່າໂຄງການ ເຊິ່ງບາງໂຄງການ ມີການດັດແກ້ສູງ; ໂຄງການອອກແບບກໍ່ສ້າງຫ້ອງການ ທີ່ໄດ້ຊຳລະຄ່າອອກແບບ ແຕ່ບໍ່ທັນມີງົບປະມານ ເລີ່ມໂຄງການໄດ້ ແລະ ຕ້ອງໄດ້ໄປຕາມຂັ້ນຕອນຂອງກົດໝາຍງົບປະມານ ແລະ ການລົງທຶນຂອງລັດ; ສ່ວນໂຄງການສ້ອມແປງນັ້ນ ໄດ້ມີການຕົກລົງໃຫ້ທາງແຂວງຮັບຜິດຊອບ, ບາງໂຄງການກໍ່ມີການມອບໂອນຄືນໃຫ້ສະພາແຂວງເປັນເຈົ້າຂອງໂຄງການ. ພ້ອມດຽວກັນນັ້ນ, ການນຳໃຊ້ງົບປະມານແມ່ນອີງໃສ່ຈຳນວນງົບປະມານ ທີ່ສະພາແຫ່ງຊາດໄດ້ຮັບຈາກກະຊວງການເງິນ ແລະ ຜ່ານມາກໍ່ໄດ້ມີການປະຊຸມຖອດຖອນບົດຮຽນ ປະຈຳປີ 2022.

**ຂ. <u>ສາເຫດພາໃຫ້ມີດ້ານດີ ແລະ ຜົນສຳເລັດ</u>**

1. ຍ້ອນກົມການເມືອງ, ຄະນະເລຂາທິການສູນກາງພັກ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳຢ່າງເປັນລະບົບປົກກະຕິ ຕໍ່ການເຄື່ອນໄຫວຂອງສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກຳນົດໃນລັດຖະທຳມະນູນ ແລະ ກົດໝາຍ; ຄະນະພັກ, ຄະນະປະຈຳສະພາແຫ່ງຊາດ ໄດ້ມີການນຳພາ-ຊີ້ນຳຢ່າງໃກ້ຊິດ, ມີການລາຍງານຂໍທິດຊີ້ນຳຈາກກົມການເມືອງສູນກາງພັກ ເປັນຕົ້ນ ການກະກຽມ ແລະ ດຳເນີນກອງປະຊຸມສະພາແຫ່ງຊາດ; ການເຄື່ອນໄຫວວຽກງານຕ່າງປະເທດ ແລະ ວຽກງານອື່ນໆ ຢ່າງເປັນປະຈຳ;

2. ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ດຳເນີນກອງປະຊຸມຂອງຕົນ ຢ່າງເປັນປົກກະຕິທຸກໆເດືອນ ແລະ ບາງເດືອນຍັງໄດ້ດຳເນີນກອງປະຊຸມວິສາມັນຂອງຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງບັນຫາສຳ

ຖັນພື້ນຖານຂອງປະເທດຊາດ ໃຫ້ມີຄວາມເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ; ຕິດຕາມ, ຊຸກຍູ້, ຕີລາຄາປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ ຕາມຂອບເຂດຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ທີ່ກຳນົດໄວ້ໃນກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ;

3. ບັນດາທ່ານພະນັກງານ, ຄະນະເລຂາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ພ້ອມດ້ວຍພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ ມີຄວາມຫ້າວຫັນ ແລະ ເປັນເຈົ້າການໃນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ມີຄວາມຮັບຜິດຊອບສູງ, ປະດິດສ້າງ, ມີການປະສານສົມທົບວຽກງານກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ພາຍນອກ;

4. ສະມາຊິກສະພາແຫ່ງຊາດ ໄດ້ເປັນເຈົ້າການຍົກສູງບົດບາດການເຄື່ອນໄຫວວຽກງານຂອງຕົນ ຢູ່ກອງປະຊຸມສະພາແຫ່ງຊາດ, ການເຄື່ອນໄຫວຕິດຕາມກວດກາ ນັບມື້ມີປະສິດທິຜົນສູງຂຶ້ນ;

5. ກົງຈັກເສນາທິການພາຍໃນສະພາແຫ່ງຊາດ ໄດ້ມີນິຕິກຳເປັນບ່ອນອີງ, ມີການປັບປຸງສັບຊ້ອນ, ຍົກຍ້າຍ ແລະ ການກຳນົດຕຳແໜ່ງງານໃນລະດັບແນ່ນອນ ຊຶ່ງມີຄວາມຕ່ອງໂສ້ໃນການປະຕິບັດໜ້າທີ່ຂອງຕົນ.

ຄ. <u>ດ້ານຄົງຄ້າງ</u>

1. ການປະສານສົມທົບເຊື່ອມກັບ ແລະ ກັບ ຂອງພາກສ່ວນຕ່າງໆ ໃນການສ້າງ ແລະ ປັບປຸງກົດໝາຍທີ່ພົວພັນກັບຫຼາຍຂົງເຂດວຽກງານ ບາງຄັ້ງບໍ່ທັນກົມກຽວ; ການສ້າງ ແລະ ປັບປຸງກົດໝາຍຈຳນວນໜຶ່ງ ຍັງບໍ່ທັນບັນລຸຕາມແຜນການປີ ລວມທັງການສ້າງນິຕິກຳໃຕ້ກົດໝາຍ; ການສ້າງກົດໝາຍມີຈຳນວນຫຼາຍ ແຕ່ການຈັດຕັ້ງປະເມີນກົດໝາຍຍັງເຮັດໄດ້ໜ້ອຍ; ຄວາມເປັນເຈົ້າການລົງເລິກຄົ້ນຄວ້າບົດຮຽນຂອງເພື່ອນມິດ ແລະ ສາກົນ ຍັງບໍ່ທັນສູງ, ບາງກົດໝາຍ ຍັງຕ້ອງໄດ້ປັບປຸງຫຼີ້ນໄປຫຼີ້ນມາຫຼາຍຄັ້ງ ເຮັດໃຫ້ການປະກາດໃຊ້ກົດໝາຍ ທີ່ສະພາແຫ່ງຊາດຮັບຮອງເອົາແລ້ວ ຍັງບໍ່ທັນປະຕິບັດໄດ້ຕາມກຳນົດເວລາ;

2. ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍຜ່ານກົນໄກດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ບາງຄັ້ງຄາວການຄົ້ນຄວ້າວິເຄາະວິໄຈບັນຫາ ແລະ ກັ່ນຕອງຂໍ້ມູນ ຍັງບໍ່ທັນເລິກເຊິ່ງ, ການປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ຍັງບໍ່ທັນກົມກຽວ ເຮັດໃຫ້ເນື້ອໃນທີ່ນຳມາພິຈາລະນາຢູ່ກອງປະຊຸມ ມີຫຼາຍຫົວຂໍ້, ເວລາຈຳກັດ, ການຄົ້ນຄວ້າພິຈາລະນາເນື້ອໃນບໍ່ທັນເລິກເຊິ່ງເທົ່າທີ່ຄວນ;

3. ການຕິດຕາມກວດກາ ເຖິງວ່າເຮັດໄດ້ຫຼາຍຂົງເຂດ, ແຕ່ຄຸນນະພາບໃນການແກ້ໄຂບັນຫາທີ່ກວດພົບເຫັນຍັງບໍ່ທັນສູງ; ການຊຸກຍູ້ພາກສ່ວນກ່ຽວຂ້ອງໃນການແກ້ໄຂວຽກງານສາຍຕ່ອນ ຍັງຊັກຊ້າ ແລະ ບໍ່ທັນແກ້ໄຂໄດ້ຫຼາຍເທົ່າທີ່ຄວນ; ການສ້າງແຜນການຕິດຕາມກວດກາ ເຖິງວ່າໄດ້ກຳນົດຫົວຂໍ້ລະອຽດ ແຕ່ການຈັດຕັ້ງປະຕິບັດວຽກງານຕົວຈິງ ຍັງບໍ່ທັນໄດ້ລົງເລິກແນະນຳວິທີແກ້ໄຂ ແລະ ແຈ້ງຜົນຂອງການແກ້ໄຂໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ຂອງທ້ອງຖິ່ນລັບຮູ້ນຳ;

4. ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ທີ່ສົ່ງມາຜ່ານສະພາແຫ່ງຊາດ ຍັງຊັກຊ້າ ຫຼາຍຄະດີຍັງແກ່ຍາວມາຫຼາຍປີ ແລະ ບໍ່ທັນໄດ້ຮັບການແກ້ໄຂ;

5. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ລັດຖະກອນ ຍັງບໍ່ທັນມີຈຸດສຸມ, ບາງຄັ້ງພາກສ່ວນຕ່າງໆ ຍັງຈັດການຝຶກອົບຮົມແບບພໍໃຫ້ພົ້ນລາວ, ບໍ່ທັນລວມສູນ ເຮັດໃຫ້ເວລາຈັດຕັ້ງປະຕິບັດມັກທັບຊ້ອນກັນ;

6. ການຜັນຂະຫຍາຍແຜນການລວມຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ເປັນແຜນການເຄື່ອນໄຫວວຽກງານລະອຽດຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ການສະຫຼຸບລາຍງານການເຄື່ອນໄຫວໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ບາງຄັ້ງບໍ່ທັນເປັນລະບົບປົກກະຕິ; ການເຄື່ອນໄຫວວຽກງານຈຳນວນໜຶ່ງ ຍັງມີລັກສະນະປົນເປກັນ ກັບການເຮັດບົດບາດຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

7. ການເຄື່ອນໄຫວວຽກງານຕ່າງປະເທດ ຂອງສະພາແຫ່ງຊາດ ຍັງບໍ່ທັນບັນລຸໄດ້ຕາມແຜນການ, ການເຂົ້າຮ່ວມກອງປະຊຸມສາກົນຈຳນວນໜຶ່ງ ຍັງມີຄວາມຈຳກັດ.

**ງ. ສາເຫດພາໃຫ້ມີດ້ານຄົງຄ້າງ**

1. ຍ້ອນການຈັດຕັ້ງຜັນຂະຫຍາຍແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ໃນໄລຍະຜ່ານມາ ຍັງບໍ່ທັນໄດ້ຮັບຄວາມເອົາໃຈໃສ່ແຕ່ຫົວທີ ເຮັດໃຫ້ການກະກຽມຮ່າງກົດໝາຍຈຳນວນໜຶ່ງຊັກຊ້າ;

2. ຍ້ອນການຜັນຂະຫຍາຍນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ ອອກເປັນອັນລະອຽດ ຍັງມີຄວາມຊັກຊ້າ; ການຄົ້ນຄວ້າຫົວຂໍ້ເນື້ອໃນທີ່ ຈະນຳເຂົ້າພິຈາລະນາຢູ່ ໃນກອງປະຊຸມ ບໍ່ທັນມີຈຸດສຸມ; ຄວາມເປັນເຈົ້າການຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ໃນການຄົ້ນຄວ້າກະກຽມເອກະສານ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມ ບໍ່ທັນເຮັດໄດ້ດີເທົ່າທີ່ຄວນ;

3. ຍ້ອນການຕິດຕາມກວດກາ ແລະ ຊຸກຍູ້ກະຊວງ, ອົງການ ໃນການແກ້ໄຂບັນຫາທີ່ສະພາແຫ່ງຊາດ ສັ່ງໃຫ້ແຕ່ລະໄລຍະ ບໍ່ທັນເປັນລະບົບປົກກະຕິຕໍ່ເນື່ອງ ເຮັດໃຫ້ວຽກງານຕິດຕາມກວດກາຈຳນວນໜຶ່ງ ບໍ່ທັນມີປະສິດທິຜົນສູງ ໂດຍສະເພາະ ການແກ້ໄຂສານດ່ວນກອງປະຊຸມສະພາແຫ່ງຊາດ ແລະ ບໍ່ທັນຜັນຂະຫຍາຍກົດໝາຍອອກເປັນນິຕິກຳໃຕ້ກົດໝາຍ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ; ການຄົ້ນຄວ້າກຳນົດຫົວຂໍ້ຕິດຕາມກວດກາ ບໍ່ທັນລະອຽດແຕ່ຫົວທີ;

4. ຍ້ອນການທຳພັບເຊື່ອມຊຶມນິຕິກຳທີ່ກ່ຽວຂ້ອງຈຳນວນໜຶ່ງ ບໍ່ທັນເລິກເຊິ່ງ ເຮັດໃຫ້ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ບາງດ້ານຍັງປົນເປກັນ;

5. ຍ້ອນການຄົ້ນຄວ້າກຳນົດເນື້ອໃນຂອງນິຕິກຳກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກເສນາທິການຊ່ວຍວຽກຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງຈຳນວນໜຶ່ງ ຍັງບໍ່ທັນລະອຽດຈະແຈ້ງເຮັດໃຫ້ປະສິດທິຜົນຂອງການເຄື່ອນໄຫວວຽກງານ ບາງດ້ານບໍ່ທັນສູງ.

**ຈ. ບົດຮຽນຖອດຖອນໄດ້**

1. ຄວາມເປັນເຈົ້າການຂອງພາກສ່ວນກ່ຽວຂ້ອງ ໃນການກະກຽມເນື້ອໃນກົດໝາຍແຕ່ຫົວທີ, ປຶກສາຫາລືຄວາມເປັນເອກະພາບກັບພາກສ່ວນກ່ຽວຂ້ອງ, ຈັດຕັ້ງປະຕິບັດຂັ້ນຕອນການສ້າງ ແລະ ປັບປຸງກົດໝາຍ ຕາມກົດໝາຍວ່າດ້ວຍການສ້າງນິຕິກຳ, ຈັດກອງປະຊຸມສຳມະນາລະດົມຄວາມຄິດເຫັນຈາກເປົ້າໝາຍຕ່າງໆ ແລະ ຈັດຕັ້ງການທາບທາມຄວາມເຫັນຂອງປະຊາຊົນ, ການປັບປຸງ, ຮຽບຮຽງເນື້ອໃນຮ່າງກົດໝາຍ ແລະ ການປະເມີນການຈັດຕັ້ງປະຕິບັດກົດໝາຍ ລວມທັງການປະກາດໃຊ້ກົດໝາຍໃຫ້ທັນເວລາ ຈະເຮັດໃຫ້ການປະຕິບັດພາລະບົດບາດດ້ານນິຕິບັນຍັດ ມີປະສິດທິພາບ ແລະ ປະສິດທິຜົນ;

2. ການເພີ່ມທະວີການປະສານສົມທົບວຽກງານ ລະຫວ່າງສະພາແຫ່ງຊາດ, ບັນດາກຳມາທິການ ແລະ ລັດຖະບານ, ບັນດາກະຊວງ, ອົງການ ເພື່ອປຶກສາຫາລືວຽກງານຕ່າງໆ ໃຫ້ເປັນລະບົບປົກກະຕິ ແລະ ຕາມນິຕິກຳກຳນົດ ຈະເຮັດໃຫ້ເນື້ອໃນທີ່ຈະນຳມາພິຈາລະນາຢູ່ກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ມີຄວາມເປັນເອກະພາບ, ຮັບປະກັນຄຸນນະພາບ ແລະ ທັນກຳນົດເວລາ;

3. ການຄົ້ນຄວ້າກຳນົດແຜນການຕິດຕາມກວດກາ ຂອງຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ ແລະ ກົງຈັກການຈັດຕັ້ງສະພາແຫ່ງຊາດ ໃຫ້ສຳເລັດແຕ່ຫົວທີ ດ້ວຍການກຳນົດຫົວຂໍ້, ແຕ່ງຕັ້ງຄະນະລົງຕິດຕາມກວດກາ, ກຳນົດເປົ້າໝາຍລົງຕິດຕາມກວດກາໃຫ້ລະອຽດ, ສະໜອງງົບປະມານໃຫ້ສົມດຸ່ນກັບວຽກງານດັ່ງກ່າວ ລວມທັງການສະຫຼຸບລາຍງານຜົນການຕິດຕາມກວດກາ ໃຫ້ມີຈຸດສຸມ ຈະເຮັດໃຫ້ວຽກງານຕິດຕາມກວດກາ ມີຄຸນນະພາບ, ສາມາດແກ້ໄຂບັນຫາທີ່ເກີດຂຶ້ນໃນສັງຄົມທັນເວລາ;

4. ການກຳນົດນິຕິກຳທີ່ຊັດເຈນ ກ່ຽວກັບລະບອບແບບແຜນວິທີເຮັດວຽກ ຂອງກົງຈັກພາຍໃນສະພາແຫ່ງຊາດ ກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໂດຍສະເພາະ ກົນໄກປະສານງານຕາມສາຍຕັ້ງ ແລະ ສາຍຂວາງ ໃນລະບົບສະພາ ຈະເຮັດໃຫ້ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ມີປະສິດທິຜົນສູງ;

5. ການຄົ້ນຄວ້າກຳນົດແຜນການຢ່າງລະອຽດ ແລະ ລວມສູນແຕ່ຫົວທີ ໂດຍສະເພາະ ການກະກຽມຫົວຂໍ້ເນື້ອໃນການຈັດຝຶກອົບຮົມສຳມະນາພາຍໃນສະພາແຫ່ງຊາດ ແລະ ທ້ອງຖິ່ນ ໃຫ້ຊັດເຈນ, ຖືກຕ້ອງຕາມແຕ່ລະເປົ້າໝາຍ ແລະ ສອດຄ່ອງກັບການເຄື່ອນໄຫວວຽກງານຕົວຈິງ ຈະເຮັດໃຫ້ວຽກງານດັ່ງກ່າວ ບັນລຸຜົນສຳເລັດຕາມແຜນການທີ່ວາງໄວ້;

6. ການເພີ່ມທະວີການປະສານສົມທົບວຽກງານ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ກັບສະພາປະຊາຊົນຂັ້ນແຂວງ ໃນການເກັບກຳຂໍ້ມູນສະພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຢູ່ພາຍໃນທ້ອງຖິ່ນ ເພື່ອນຳສະເໜີກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ຈະເຮັດໃຫ້ການເຄື່ອນໄຫວຂອງສະພາປະຊາຊົນຂັ້ນແຂວງ ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

## II. ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານ ປະຈຳປີ 2023 ບັນລຸຕາມຄາດໝາຍທີ່ວາງໄວ້, ສະພາແຫ່ງຊາດ ກຳນົດແຜນການວຽກງານແຕ່ລະດ້ານ ດັ່ງນີ້:

### ກ. ຄາດໝາຍສູ້ຊົນ

1) ຮັບປະກັນການປະຕິບັດພາລະບົດບາດນິຕິບັນຍັດ ໂດຍສະເພາະ ແຜນການສ້າງ ແລະ ປັບປຸງກົດໝາຍ ໃນປີ 2023 ຂອງສະພາແຫ່ງຊາດ ໃຫ້ບັນລຸຕາມແຜນການທີ່ວາງໄວ້;

2) ຮັບປະກັນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ;

3) ຮັບປະກັນການປະຕິບັດພາລະບົດບາດຕິດຕາມກວດກາ ຂອງສະພາແຫ່ງຊາດ ຕາມລັດຖະທຳມະນູນ ແລະ ກົດໝາຍ ໃຫ້ມີປະສິດທິພາບ, ປະສິດທິຜົນ;

4) ເອົາໃຈໃສ່ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ລັດຖະກອນ ໄປຕາມແຜນການລວມຂອງສະພາແຫ່ງຊາດ;

5) ເພີ່ມທະວີການພົວພັນຮ່ວມມື ແລະ ປະສານງານຢ່າງກົມກຽວ ລະຫວ່າງສະພາແຫ່ງຊາດ ກັບບັນດາອົງການຂອງລັດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມຄ່ອງຕົວດີຂຶ້ນກວ່າເກົ່າ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ;

6) ສືບຕໍ່ເຄື່ອນໄຫວວຽກງານການຕ່າງປະເທດ ໃຫ້ສອດຄ່ອງກັບແນວທາງການຕ່າງປະເທດຂອງພັກ, ປະກອບສ່ວນຍົກສູງບົດບາດຂອງສະພາແຫ່ງຊາດ ໃນເວທີພາກພື້ນ ແລະ ສາກົນ.

### ຂ. ທິດທາງ ແລະ ວຽກງານຈຸດສຸມແຕ່ລະດ້ານ

#### 1. ວຽກງານນິຕິບັນຍັດ

1) ກະກຽມບັນດາຮ່າງກົດໝາຍ ຈຳນວນ 25 ສະບັບ. ໃນນີ້, ກົດໝາຍສ້າງໃໝ່ ຈຳນວນ 9 ສະບັບ ແລະ ກົດໝາຍປັບປຸງ ຈຳນວນ 16 ສະບັບ ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມກອງປະຊຸມສະໄໝສາມັນ ເທື່ອທີ 5 ແລະ ເທື່ອ 6 ຂອງສະພາແຫ່ງຊາດ ຊຸດທີ IX; ຊີ້ນຳການປັບປຸງ ແລະ ຮຽບຮຽງບັນດາກົດໝາຍ ຈຳນວນ 12 ສະບັບ ທີ່ໄດ້ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອສະເໜີຂໍການພິຈາລະນາປະກາດໃຊ້ **(ເອກະສານຊ້ອນທ້າຍທີ 15)**;

2) ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ ໃຫ້ບັນລຸຕາມແຜນການທີ່ວາງໄວ້ ທັງຮັບປະກັນສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ, ຖືກຕ້ອງຕາມຂັ້ນຕອນ ແລະ ທັນເວລາທີ່ກົດໝາຍກຳນົດ ໂດຍສະເພາະ ການປະກາດໃຊ້ກົດໝາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວ;

3) ຄົ້ນຄວ້າ ແລະ ປັບປຸງກົດໝາຍຂົງເຂດວຽກງານຂອງສະພາແຫ່ງຊາດ ລວມທັງການອອກນິຕິກຳໃຕ້ກົດໝາຍທີ່ຕິດພັນກັບວຽກງານຂອງສະພາແຫ່ງຊາດ; ຊີ້ນຳການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຊຸກຍູ້ການເຜີຍແຜ່ເນື້ອໃນຂອງກົດໝາຍ ທີ່ສະພາແຫ່ງຊາດຮັບຮອງ ເພື່ອມອບໃຫ້ບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ ອອກເປັນນິຕິກຳໃຕ້ກົດໝາຍໃຫ້ສຳເລັດ;

4) ຄົ້ນຄວ້າການຕີຄວາມໝາຍ ຫຼື ອະທິບາຍລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ, ການໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງລັດຖະບັນຍັດ, ດຳລັດ ແລະ ເອກະສານຕ່າງໆ ຕາມການສະເໜີຂອງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງ;

5) ຄົ້ນຄວ້າສ້າງແຜນການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໂດຍສະເພາະ ກົດໝາຍທີ່ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ, ຕິດພັນກັບການດຳລົງຊີວິດຂອງປະຊາຊົນ ເພື່ອຊຸກຍູ້ກະຊວງ, ອົງການ ໃນການຈັດຕັ້ງປະຕິບັດແຕ່ລະໄລຍະ ໃຫ້ບັນລຸຕາມແຜນການດັ່ງກ່າວ.

## 2. <u>ວຽກງານຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ</u>

ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໃນປີ 2023 ຈະໄດ້ຄົ້ນຄວ້າ, ພິຈາລະນາຮັບຮອງເອົາເນື້ອໃນຕ່າງໆ ຜ່ານກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ດັ່ງນີ້:

**2.1 ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ມີເນື້ອໃນຕົ້ນຕໍ:**

1) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນງົບປະມານແຫ່ງລັດ 5 ປີ (2021-2025); ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

3) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນເງິນຕາ 5 ປີ (2021-2025); ການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

4) ບົດລາຍງານການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ;

5) ບົດລາຍງານການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງສະພາແຫ່ງຊາດ ຊຸດທີ IX;

6) ບົດລາຍງານການຕິດຕາມກວດກາ ການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ ແລະ ການປັບປຸງລະບົບປະກັນສັງຄົມ ທີ່ມີຄຸນນະພາບ;

7) ພິຈາລະນາ ແລະ ຮັບຮອງເອົາບັນດາຮ່າງກົດໝາຍ ຈຳນວນ 13 ສະບັບ;

8) ລາຍງານ, ຊີ້ແຈງຕໍ່ບັນຫາພົ້ນເດັ່ນໃດໜຶ່ງ ທີ່ເກີດຂຶ້ນໃນສັງຄົມ ຂອງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX; ສູ້ຊົນແກ້ໄຂບັນດາຄະດີທີ່ແກ່ຍາວກັບບັນດາພາກສ່ວນກ່ຽວຂ້ອງ ເພື່ອຫຼຸດຜ່ອນຂະບວນການຄຳຮ້ອງຂໍຄວາມເປັນທຳແບບຫຼົບໄປຫຼົບມາຫຼາຍຄັ້ງ;

9) ຈັດຕັ້ງການປະເມີນຜົນດ້ວຍການລົງຄະແນນສຽງ ຫຼື ດ້ວຍການໃຫ້ຄະແນນໄວ້ວາງໃຈ ໃນການປະຕິບັດໜ້າທີ່ວຽກງານຂອງບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ລວມທັງຈັດຕັ້ງການໃຫ້ຄະແນນຕໍ່ເປົ້າໝາຍທີ່ລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ຢູ່ກອງປະຊຸມສະພາແຫ່ງຊາດ;

10) ການປະເມີນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຍຸຕິທຳ.

**2.2 ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ມີເນື້ອໃນຕົ້ນຕໍ:**

1) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024;

2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ, ແຜນເງິນຕາ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024;

3) ບົດລາຍງານຂອງລັດຖະບານ ກ່ຽວກັບຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ;

4) ບົດລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 17/ສພຊ, ລົງວັນທີ 25 ມິຖຸນາ 2019 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການພັດທະນາຊັບພະຍາກອນມະນຸດ ຕາມຂະແໜງການບູລິມະສິດ ໃນສາຂາວິຊາກະສິກຳ, ຄູ ແລະ ພະຍາບານ;

5) ປຶກສາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ;

6) ປຶກສາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ປຶກສາຍງານຜົນການກວດສອບປິດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022;

7) ປຶກສາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງອົງການກວດກາແຫ່ງລັດ; ປຶກສາຍງານຜົນການກວດກາ ຕາມຜົນການກວດສອບ ປີ 2021;

8) ປຶກສາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສະພາແຫ່ງຊາດ;

9) ປຶກປະກອບຄຳເຫັນຂອງສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ;

10) ພິຈາລະນາ ແລະ ຮັບຮອງເອົາບັນດາຮ່າງກົດໝາຍ ຈຳນວນ 12 ສະບັບ;

11) ຈັດຕັ້ງການໃຫ້ຄະແນນຕໍ່ເປົ້າໝາຍທີ່ລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ຢູ່ກອງປະຊຸມສະພາແຫ່ງຊາດ;

12) ການປະເມີນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**3.3** ເອົາໃຈໃສ່ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອຮັບປະກັນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ສອດຄ່ອງກັບສະພາບຕົວຈິງແຕ່ລະໄລຍະ ຕິດພັນກັບແຜນວຽກຈຸດສຸມຂອງສະພາແຫ່ງຊາດ.

**3. <u>ວຽກງານຕິດຕາມກວດກາ</u>**

ການຕິດຕາມກວດກາຂອງສະພາແຫ່ງຊາດ ໃນປີ 2023 ຈະໄດ້ສຸມໃສ່ວຽກງານຕົ້ນຕໍ ດັ່ງນີ້:

1) ຕິດຕາມກວດກາ ດ້ວຍການຮັບຟັງລາຍງານຂອງລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຢູ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ລວມທັງການຊັກຖາມ ແລະ ຊີ້ແຈງ ຕໍ່ບັນຫາພົ້ນເດັ່ນຂອງສັງຄົມ;

2) ຕິດຕາມກວດກາ ດ້ວຍການດຳເນີນກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບຄະນະລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສູນກາງແນວລາວສ້າງຊາດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອປຶກສາຫາລືເປັນເອກະພາບໃນການແກ້ໄຂບັນຫາທີ່ເດືອດຮ້ອນຂອງສັງຄົມ;

3) ຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ການແກ້ໄຂບັນຫາຢາເສບຕິດ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນ ເທື່ອທີ 4 ແລະ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX;

4) ຕິດຕາມກວດກາໂຄງການລົງທຶນຂະໜາດໃຫຍ່ຈຳນວນໜຶ່ງ ທີ່ເຫັນວ່າມີຄວາມຫຍຸ້ງຍາກ, ສັບສົນ ຫຼື ມີຜົນກະທົບຢ່າງຫຼວງຫຼາຍ ຕໍ່ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ;

5) ຕິດຕາມກວດກາ ຜ່ານການດຳເນີນກອງປະຊຸມຄົບຄະນະ ປະຈຳປີ 2023 ຂອງບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ພາກສ່ວນກ່ຽວຂ້ອງ;

6) ຕິດຕາມກວດກາຜົນການແກ້ໄຂຄຳສະເໜີຂອງປະຊາຊົນ ຕາມປຶກສາຍງານອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ສະເໜີຢູ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

7) ຕິດຕາມກວດກາ ຜ່ານກົນໄກການຮັບ ແລະ ພິຈາລະນາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ຈັດຕັ້ງການຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ໃນໄລຍະດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ;

8) ຕິດຕາມກວດກາ ການຈັດຕັ້ງການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

**4. ວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ**

ສະພາແຫ່ງຊາດ ເອົາໃຈໃສ່ນຳພາ-ຊີ້ນຳວຽກງານສ້າງຄວາມເຂັ້ມແຂງ ໃນປີ 2023 ຈະໄດ້ສຸມໃສ່ຈັດຕັ້ງປະຕິບັດທີ່ອຂໍ້ຕ່າງໆ ດັ່ງນີ້:

1) ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນການປະຕິບັດໜ້າທີ່ ຢູ່ກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມສະພາປະຊາຊົນຂັ້ນແຂວງ ໃນການພິຈາລະນາຮັບຮອງເອົາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ການພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ, ຂອງທ້ອງຖິ່ນ ແລະ ການຕິດຕາມກວດກາ ໃຫ້ນັບມື້ມີປະສິດທິຜົນສູງຂຶ້ນ;

2) ສ້າງແຜນການບຳລຸງຍົກລະດັບໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍສະເພາະ ກຳມະການຂອງແຕ່ລະກຳມາທິການ ໄດ້ຝຶກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນໃນທີ່ອຂໍ້ຕ່າງໆ ຂອງແຕ່ລະຂົງເຂດວຽກງານ ຢູ່ພາຍໃນ ແລະ ຕ່າງປະເທດ;

3) ສ້າງແຜນການ ເພື່ອກຳນົດຫຼັກສູດການຝຶກອົບຮົມໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເປັນຕົ້ນ ການຄົ້ນຄວ້າເອກະສານ ແລະ ການສ້າງຄູຝຶກເປັນວິທະຍາກອນ;

4) ສືບຕໍ່ຄົ້ນຄວ້າປັບປຸງກົງຈັກ ແລະ ບຸກຄະລາກອນພາຍໃນສະພາແຫ່ງຊາດ;

5) ຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ ໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ-ຕ່າງປະເທດ ໃຫ້ພະນັກງານຫຼັກແຫຼ່ງ, ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ;

6) ເອົາໃຈໃສ່ຕິດຕາມຊຸກຍູ້ການສ້າງທີ່ອຂໍ້ວິທະຍາສາດ, ທັກສະ ແລະ ສ້າງປຶ້ມຄູ່ມື ທີ່ພົວພັນກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ, ກົງຈັກເສນາທິການຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ລວມທັງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານເສນາທິການໃຫ້ມີຄວາມສາມາດຂຶ້ນຕື່ມ ເພື່ອເປັນບ່ອນອີງໃຫ້ແກ່ການປະຕິບັດໜ້າທີ່ວຽກງານ ໃຫ້ມີປະສິດທິຜົນດີຂຶ້ນ;

7) ດຳເນີນກອງປະຊຸມຮ່ວມ ລະຫວ່າງບັນດາກຳມາທິການ, ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຍົກສູງຄຸນນະພາບການປະຕິບັດໜ້າທີ່ວຽກງານ;

8) ສ້າງແຜນການພົບປະ, ແລກປ່ຽນບົດຮຽນຕ່າງໆ ລະຫວ່າງສະພາແຫ່ງຊາດ ກັບສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ເພື່ອປຶກສາຫາລືໃນການປະຕິບັດໜ້າທີ່ວຽກງານຕາມພາລະບົດບາດຂອງແຕ່ລະພາກສ່ວນ.

**5. ວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ**

1) ຊີ້ນຳການປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ, ຄະນະພັກ, ອົງການປົກຄອງທ້ອງຖິ່ນ ໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ເພື່ອຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ຢູ່ແຕ່ລະທ້ອງຖິ່ນ ຕາມກົດໝາຍກຳນົດ ໃຫ້ນັບມື້ມີປະສິດທິຜົນດີຂຶ້ນ;

2) ຊີ້ນຳການເຄື່ອນໄຫວວຽກງານຕ່າງໆ ເປັນຕົ້ນ ການສ້າງ ແລະ ປັບປຸງກົດໝາຍ, ການປະເມີນຜົນການປະຕິບັດກົດໝາຍ, ການໂຄສະນາເຜີຍແຜ່, ທາບທາມກົດໝາຍ, ຜົນສຳເລັດກອງປະຊຸມຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ; ການຕິດຕາມກວດກາ; ການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ວຽກງານອື່ນໆ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຕ່າງໆ ມີປະສິດທິພາບ, ປະສິດທິຜົນ;

3) ຊີ້ນຳການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II, ກອງປະຊຸມຄົບຄະນະ ປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ; ກອງປະຊຸມແລກປ່ຽນບົດຮຽນລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມປັ່ນອ້ອມອື່ນໆ;

4) ຄະນະປະຈຳສະພາແຫ່ງຊາດ ສືບຕໍ່ຄົ້ນຄວ້າປັບປຸງແບບແຜນວິທີເຮັດວຽກ ລະຫວ່າງກົງຈັກຂອງສະພາແຫ່ງຊາດ ກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ພ້ອມທັງ

ສະຫຼຸບຕີລາຄາການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ລາຍງານຄະນະປະຈຳສະພາແຫ່ງຊາດ ເພື່ອເປັນຂໍ້ມູນໃຫ້ແກ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ;

5) ສືບຕໍ່ການເກັບກຳຂໍ້ມູນສະພາບການເຄື່ອນໄຫວຂອງບັນດາກິ່ງຈັກການຈັດຕັ້ງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ລາຍງານຄະນະປະຈຳສະພາແຫ່ງຊາດ; ເກັບກຳຜົນງານການເຄື່ອນໄຫວວຽກງານຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳປີ 2022 ແລະ 2023 ເພື່ອເປັນຂໍ້ມູນຄົ້ນຄວ້າການບ້ອງບໍ່;

6) ສືບຕໍ່ການສ້າງແຜນການພົບປະ, ແລກປ່ຽນບົດຮຽນຕ່າງໆ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ແລະ ແນວລາວສ້າງຊາດແຂວງ/ນະຄອນຫຼວງ, ສະຫະພັນນັກຮົບເກົ່າແຂວງ ແລະ ອົງການຈັດຕັ້ງມະຫາຊົນຂັ້ນທ້ອງຖິ່ນ ເພື່ອປຶກສາຫາລືໃນການປະຕິບັດໜ້າທີ່ວຽກງານຕາມພາລະບົດບາດຂອງແຕ່ລະພາກສ່ວນ.

## 6. ວຽກງານການເຄື່ອນໄຫວຕ່າງປະເທດ

ໃນປີ 2023 ສະພາແຫ່ງຊາດ ຈະໄດ້ເຄື່ອນໄຫວວຽກງານຕ່າງປະເທດ ດັ່ງນີ້:

1) ເຄື່ອນໄຫວຢ້ຽມຢາມສັນຖະວະໄມຕີ ຢ່າງເປັນທາງການ ຢູ່ບັນດາປະເທດອ້ອມຂ້າງຈຳນວນໜຶ່ງ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ຫຼື ດ້ວຍຮູບການຜ່ານລະບົບກອງປະຊຸມທາງໄກ;

2) ເຂົ້າຮ່ວມການເຄື່ອນໄຫວ ແລະ ປະຕິບັດພັນທະຂອງສະພາແຫ່ງຊາດລາວ ຕໍ່ບັນດາອົງການຈັດຕັ້ງລັດຖະສະພາພາກພື້ນ ແລະ ສາກົນ ທີ່ສະພາແຫ່ງຊາດລາວ ເປັນພາຄີ ເປັນຕົ້ນ ກອງປະຊຸມລັດຖະສະພາລະຫວ່າງຊາດອາຊຽນ (AIPA), ກອງປະຊຸມລັດຖະສະພາສາກົນ (IPU), ກອງປະຊຸມການເປັນຄູ່ຮ່ວມລັດຖະສະພາອາຊີ-ເອີຣົບ (ASEP), ກອງປະຊຸມໃຫຍ່ສະມັດຊາລັດຖະສະພາບັນດາປະເທດທີ່ໃຊ້ພາສາຝຣັ່ງ (APF), ກອງປະຊຸມເວທີປຶກສາຫາລືເອທີລັດຖະສະພາອາຊີ-ປາຊີຟິກ (APPF);

3) ກະກຽມ ແລະ ເປັນເຈົ້າພາບຈັດກອງປະຊຸມສຸດຍອດສະພາແຫ່ງຊາດ ຂອງສາມປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ (CLV) ຄາດຄະເນຈະຈັດຂຶ້ນໃນວັນທີ 24-28 ເມສາ 2023 ຢູ່ ສປປ ລາວ;

4) ກະກຽມຕ້ອນຮັບຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ບັນດາປະເທດຈຳນວນໜຶ່ງ ທີ່ເຄື່ອນໄຫວ ຢ້ຽມຢາມ ສປປ ລາວ; ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທູດານຸທູດ ປະຈຳຢູ່ ສປປ ລາວ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ແລະ ແຂກຕ່າງປະເທດ;

5) ຄົ້ນຄວ້າໃຫ້ພະນັກງານວິຊາການໄປຖອດຖອນບົດຮຽນ ຢູ່ຕ່າງປະເທດ ເພື່ອກະກຽມການເປັນເຈົ້າພາບຈັດກອງປະຊຸມໄອປາ ຄັ້ງທີ 45 ໃນປີ 2024; ຈັດຝຶກອົບຮົມພາສາອັງກິດ ຕາມແຜນການສະໜອງທຶນຂອງບາງປະເທດ;

6) ສ້າງເງື່ອນໄຂໃຫ້ແກ່ຄະນະມິດຕະພາບລັດຖະສະພາຂອງສະພາແຫ່ງຊາດລາວ ເພື່ອເຄື່ອນໄຫວຢ້ຽມຢາມ ແລະ ພົບປະກັບບັນດາລັດຖະສະພາຕ່າງປະເທດ ອ້ອມຂ້າງຈຳນວນໜຶ່ງ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ຫຼື ດ້ວຍຮູບແບບຜ່ານລະບົບກອງປະຊຸມທາງໄກ;

7) ເພີ່ມທະວີການຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ຄະນະປະຈຳສະພາແຫ່ງຊາດ ໄດ້ຕົກລົງໃຫ້ສັດຕະຍາບັນ.

## 7. ວຽກງານການເຄື່ອນໄຫວປົ່ນອ້ອມ

ສືບຕໍ່ຊີ້ນຳການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອແກ້ໄຂບັນຫາການສ້າງພື້ນຖານໂຄງລ່າງຂອງສະພາປະຊາຊົນຂັ້ນແຂວງ, ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

# IV. ມາດຕະການຈັດຕັ້ງປະຕິບັດ

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ໄດ້ຮັບຜົນສຳເລັດ, ຄະນະປະຈຳສະພາແຫ່ງຊາດ ກຳນົດມາດຕະການ ດັ່ງນີ້:

1) ເປັນໃຈກາງກະກຽມສ້າງ ແລະ ປັບປຸງກົດໝາຍ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX;

2) ຍົກສູງການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍຜ່ານກົນໄກການດຳເນີນໃນ ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມອື່ນໆ;

3) ເພີ່ມທະວີການສ້າງແຜນການຕິດຕາມກວດກາຢ່າງມີຈຸດສຸມ ໂດຍສະເພາະ ການກຳນົດຫົວຂໍ້, ຂັ້ນຕອນ ວິທີການຕິດຕາມກວດກາ ໃຫ້ມີຄວາມຊັດເຈນ, ຄົ້ນຄວ້າກຳແໜ້ນເນື້ອໃນຂອງກົດໝາຍ, ສົມທົບກັບພາກສ່ວນຕ່າງໆ, ສະຫຼຸບລາຍງານຜົນການຕິດຕາມກວດກາ ແລະ ສະເໜີມາດຕະການແກ້ໄຂບັນຫາດັ່ງກ່າວຕໍ່ ຄະນະປະຈຳສະພາແຫ່ງຊາດ ມີທິດຊີ້ນຳໃຫ້ທັນເວລາ;

4) ເພີ່ມທະວີຄວາມເປັນເຈົ້າການຂອງສະມາຊິກສະພາແຫ່ງຊາດ ໃນການເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ; ເອົາໃຈໃສ່ການຕິດຕາມກວດກາ, ຊຸກຍູ້ ແລະ ເກັບກຳຂໍ້ມູນສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ; ຖືສຳຄັນການເຄົາລົບ, ປະຕິບັດລັດຖະທຳມະນູນ, ກົດໝາຍຂອງບັນດາອົງການລັດ, ການຈັດຕັ້ງຜັນຂະຫຍາຍມະຕິຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ; ປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ ເພື່ອເຄື່ອນໄຫວຕາມສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ກຳນົດໃນກົດໝາຍ;

5) ຄະນະປະຈຳສະພາແຫ່ງຊາດ, ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ເອົາໃຈໃສ່ຜັນຂະຫຍາຍແຜນການສະບັບນີ້ ອອກເປັນແຜນວຽກຈຸດສຸມອັນລະອຽດຂອງຕົນ ແລະ ເປັນເຈົ້າການປະສານສົມທົບກັບອົງການອື່ນໆ ຂອງລັດ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສ້າງສິ່ງອຳນວຍຄວາມສະດວກໃນການປະຕິບັດຕາມສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ ທີ່ໄດ້ກຳນົດໃນກົດໝາຍ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

**ປອ ໄຊສົມພອນ ພົມວິຫານ**